**ມິຊຊາສົມໂພດພຣະກາຍ**
**ແລະພຣະໂລຫິດຂອງພຣະເຢຊູເຈົ້າ**
**ວັນອາທິດ ທີ 6 ມິຖຸນາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 14, 12-16, 22-26**

ໃນມື້ຕົ້ນແຫ່ງງານສົມໂພດ ອັນແມ່ນວັນທີ່ເຂົາຂ້າລູກແກະປາສກາ, ພວກສາວົກທູນພຣະເຢຊູເຈົ້າວ່າ: "ພຣະອົງຢາກໃຫ້ພວກຂ້າພະເຈົ້າໄປຈັດຕຽມການກິນລ້ຽງປາສກາຢູ່ບ່ອນໃດ?" ພຣະອົງຈຶ່ງແຕ່ງສາວົກສອງຄົນໄປພ້ອມທັງສັ່ງວ່າ: "ຈົ່ງເຂົ້າໄປໃນເມືອງແລ້ວພວກເຈົ້າຈະພໍ້ຄົນຜູ້ໜຶ່ງແບກໄຫນໍ້າ. ຈົ່ງຍ່າງຕາມເຂົາໄປແລະເຂົາເຂົ້າໃນເຮືອນໃດກໍໃຫ້ເວົ້າກັບເຈົ້າຂອງເຮືອນວ່າ: "ພຣະອາຈານສັ່ງໃຫ້ຖາມວ່າ ຫ້ອງບ່ອນເຮົາຈະຮັບປະທານປາສກາກັບພວກສາວົກຂອງເຮົານັ້ນຢູ່ໃສ? ເຂົາກໍຈະຊີ້ຫ້ອງໃຫຍ່ຢູ່ຊັ້ນເທິງທີ່ຕຽມໄວ້ສຳລັບການກິນລ້ຽງແລ້ວ. ພວກເຈົ້າຈົ່ງພາກັນຕຽມອາຫານປາສກາຢູ່ທີ່ນັ້ນ." ສາວົກທັງສອງກໍພາກັນເດີນທາງເຂົ້າໄປໃນເມືອງ. ພວກເຂົາໄດ້ພົບເຫັນທຸກຢ່າງຕາມທີ່ພຣະເຢຊູເຈົ້າໄດ້ກ່າວກັບພວກເຂົາ, ແລ້ວກໍພາກັນຈັດຕຽມອາຫານປາສກາ.

ໃນເວລາຮັບປະທານອາຫານຢູ່ນັ້ນ, ພຣະເຢຊູເຈົ້າຊົງຈັບເອົາປັງ, ຊົງກ່າວສົມມະນາຄຸນ, ຊົງບິແບ່ງແລ້ວຍື່ນໃຫ້ພວກສາວົກພ້ອມທັງກ່າວວ່າ: "ຈົ່ງຮັບເອົາເຖີດ, ນີ້ແຫລະກາຍຂອງເຮົາ." ແລ້ວພຣະອົງຊົງຈັບເອົາຈອກ, ຊົງສົມມະນາພຣະຄຸນແລ້ວຍື່ນໃຫ້ພວກເຂົາແລະເຂົາທຸກຄົນກໍໄດ້ດື່ມ. ພຣະອົງຊົງກ່າວກັບພວກເຂົາວ່າ: "ນີ້ແຫລະໂລຫິດຂອງເຮົາ, ແມ່ນໂລຫິດແຫ່ງພຣະສຳພັນໄມຕີໃໝ່ທີ່ຈະໄຫລຫລັ່ງອອກມາເພື່ອຄົນທັງຫລາຍ". ເຮົາບອກພວກເຈົ້າເປັນຄວາມຈິງວ່າ: "ເຮົາຈະບໍ່ດື່ມເຫລົ້າອະງຸ່ນອີກຈົນເຖິງວັນທີ່ເຮົາຈະໄດ້ດື່ມເຫລົ້າອະງຸ່ນໃໝ່ໃນອານາຈັກຂອງພຣະເຈົ້າ".

ເມື່ອຮ້ອງເພງສົມມະນາຄຸນແລ້ວ, ພຣະອົງກໍສະເດັດອອກເດີນທາງໄປພູໝາກກອກເທດພ້ອມກັບພວກສາວົກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ພຣະກຣິສຕະຈັກສົມໂພດພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າ. ເປັນໂອກາດໃຫ້ພວກເຮົາໄດ້ພ້ອມກັນຄຶດພິດຈາລະນາເຖິງຄວາມໝາຍຄວາມສຳຄັນຂອງພິທີບູຊາມິຊຊາ. ແລະໃນເວລາດຽວກັນກໍເປັນໂອກາດຊ່ວຍພວກເຮົາໃຫ້ເບິ່ງຄືນຊີວິດຄວາມເຊື່ອຂອງພວກເຮົາທຸກຄັ້ງທີ່ພວກເຮົາຮ່ວມພິທີບູຊາມິຊຊາ.

ພິທີບູຊາມິຊຊາແມ່ນຫຍັງ? ແລະມີຄວາມສຳຄັນຢ່າງໃດສຳລັບພວກເຮົາຜູ້ເປັນກຣິສຕັງ? ຫລາຍຄົນກໍຈະຕອບວ່າ: ພິທີບູຊາມິຊຊາແມ່ນທັມລໍ້າເລິກແຫ່ງການທໍລະມານ, ຕາຍແລະການກັບເປັນຄືນມາຂອງພຣະເຢຊູເຈົ້າ. ອັນແມ່ນຄຳຕອບທີ່ຖືກຕ້ອງຕາມຄຳສອນຂອງພຣະກຣິສຕະຈັກ. ແຕ່ຄຳຕອບນີ້ຈະມີຄວາມໝາຍກໍຕໍ່ເມື່ອພວກເຮົາເຂົ້າໃຈເຖິງຄວາມຮັກທີ່ພຣະເຢຊູເຈົ້າຊົງມີຕໍ່ພວກເຮົາຜ່ານທາງການມອບຊີວິດຂອງພຣະອົງເພື່ອພວກເຮົາ.

ໃນພຣະທຳເກົ່າ, ບັນດາມະຫາສົງໄດ້ເອົາແກະມາຂ້າເປັນເຄື່ອງບູຊາຍັນໃຫ້ພຣະເຈົ້າ ເພື່ອຈະໄດ້ຮັບການອະໄພໂທດຈາກພຣະອົງ. ສ່ວນເລືອດຂອງສັດກໍຈະເອົາມາຊິດໃສ່ຄົນເປື້ອນໝອງເພື່ອເປັນເຄື່ອງໝາຍແຫ່ງການຊຳລະລ້າງໃຫ້ບໍລິສຸດ.

ສ່ວນໃນພຣະທຳໃໝ່, ພຣະເຢຊູເຈົ້າເປັນທັງມະຫາສົງຜູ້ຖະຫວາຍເຄື່ອງບູຊາຍັນໃຫ້ພຣະບິດາ. ພຣະອົງເປັນທັງແກະຂ້າບູຊາຍັນ. ແລະເລືອດຂອງພຣະອົງໄດ້ໄຫລລົ່ງບົນໄມ້ກາງເຂນເພື່ອຊຳລະລ້າງມະນຸດຜູ້ເປັນຄົນບາບ. ແລະຍິ່ງໄປກວ່ານັ້ນ, ພຣະອົງຍັງມອບພຣະກາຍແລະພຣະໂລຫິດຂອງພຣະອົງເປັນອາຫານລ້ຽງວິນຍານມະນຸດໃຫ້ໄດ້ຮັບຊີວິດນິລັນດອນ.

ສິ່ງທີ່ກ່າວມາຂ້າງເທິງນີ້, ຖ້າບໍ່ແມ່ນຍ້ອນຮັກກໍຈະເປັນໄປບໍ່ໄດ້. ເພາະບໍ່ມີຄວາມຮັກໃດຍິ່ງໃຫຍ່ເທົ່າການຍອມສະລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ. ດັ່ງນີ້, ທຸກຄັ້ງທີ່ພວກເຮົາມາຮ່ວມບູຊາມິຊຊາແມ່ນພວກເຮົາມາລື້ຟື້ນທຳລໍ້າເລິກແຫ່ງຄວາມຮັກທີ່ພຣະເຢຊູເຈົ້າມີຕໍ່ພວກເຮົາຜ່ານທາງການຕາຍແລະການກັບເປັນຄືນມາຂອງພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໃນວັນສົມໂພດພຣະກາຍແລະພຣະໂລຫິດຂອງພຣະອົງນີ້ ໂຜດໃຫ້ລູກສຳພັດໄດ້ເຖິງຄວາມຮັກຂອງພຣະອົງທີ່ມີຕໍ່ລູກແລະຕໍ່ມະນຸດທັງມວນ. ເພື່ອລູກຈະໄດ້ເປັນພິຍານເຖິງຄວາມຮັກຂອງພຣະອົງໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ